# ສະຫລອງພຣະກາຍແລະພຣະໂລຫິດຂອງພຣະເຢຊູເຈົ້າ

## ອາທິດທີ 3 ມິຖຸນາ 2018



**ພຣະວໍລະສານໂດຍນັກບຸນມັກໂກ 14, 12-16, 22-26**

ໃນມື້ຕົ້ນຂອງງານສົມໂພດອັນແມ່ນວັນທີ່ເຂົາຂ້າລູກແກະປາສກາ. ພວກສາວົກທູນພຣະເຢຊູເຈົ້າວ່າ: ພຣະອົງຢາກໃຫ້ພວກຂ້າພະເຈົ້າໄປຈັດຕຽມການກິນລ້ຽງປາສກາຢູ່ບ່ອນໃດ? ພຣະເຢຊູເຈົ້າຈຶ່ງແຕ່ງສາວົກສອງຄົນໄປພ້ອມທັງສັ່ງວ່າ: ຈົ່ງເຂົ້າໄປໃນເມືອງ ແລ້ວພວກເຈົ້າຈະພໍ້ຄົນຜູ້ໜຶ່ງແບກໄຫນໍ້າ. ຈົ່ງຍ່າງຕາມເຂົາໄປ ແລະເຂົາເຂົ້າໃນເຮືອນໃດກໍໃຫ້ເວົ້າກັບເຈົ້າຂອງເຮືອນວ່າ: ພຣະອາຈານສັ່ງໃຫ້ຖາມວ່າ ຫ້ອງບ່ອນເຮົາຈະຮັບປະທານປາສກາກັບພວກສາວົກຂອງເຮົານັ້ນຢູ່ໃສ? ເຂົາກໍຈະຊີ້ຫ້ອງໃຫຍ່ຢູ່ຊັ້ນເທິງທີ່ຕຽມໄວ້ສຳລັບການກິນລ້ຽງແລ້ວ. ພວກເຈົ້າຈົ່ງພາກັນຕຽມອາຫານປາສກາຢູ່ທີ່ນັ້ນ. ສາວົກທັງສອງກໍພາກັນເດີນທາງເຂົ້າໄປໃນເມືອງ. ພວກເຂົາໄດ້ພົບເຫັນທຸກຢ່າງຕາມທີ່ພຣະເຢຊູເຈົ້າໄດ້ກ່າວກັບພວກເຂົາ. ແລ້ວກໍພາກັນຈັດຕຽມອາຫານປາສກາ.

ໃນເວລາຮັບປະທານອາຫານຢູ່ນັ້ນ, ພຣະເຢຊູເຈົ້າຊົງຈັບເອົາປັງ, ຊົງກ່າວຄຳອວຍພອນ, ຊົງບິແບ່ງແລ້ວຍື່ນໃຫ້ພວກສາວົກພ້ອມທັງກ່າວວ່າ: ຈົ່ງຮັບເອົາເຖີດ, ນີ້ແລກາຍຂອງເຮົາ. ແລ້ວພຣະອົງຊົງຈັບເອົາຈອກ, ຊົງສົມມະນາພຣະຄຸນແລ້ວຍື່ນໃຫ້ພວກເຂົາແລະເຂົາທຸກຄົນກໍໄດ້ດື່ມ. ພຣະອົງຊົງກ່າວກັບພວກເຂົາວ່າ: ນີ້ແລໂລຫິດຂອງເຮົາ, ແມ່ນໂລຫິດແຫ່ງພຣະສຳພັນໄມຕຣີໃໝ່ທີ່ຈະໄຫລຫລັ່ງອອກມາເພື່ອຄົນທັງຫລາຍ. ເຮົາບອກພວກເຈົ້າເປັນຄວາມຈິງວ່າ: ເຮົາຈະບໍ່ດື່ມເຫລົ້າອະງຸ່ນອີກຈົນເຖິງວັນທີ່ເຮົາຈະໄດ້ດື່ມເຫລົ້າອະງຸ່ນໃໝ່ໃນອານາຈັກຂອງພຣະເຈົ້າ.

ເມື່ອຮ້ອງເພງສົມມະນາຄຸນແລ້ວ, ພຣະອົງກໍສະເດັດອອກເດີນທາງໄປພູໝາກກອກເທດພ້ອມກັບພວກສາວົກ.

*ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ*

**ບົດແບ່ງປັນ: ມກ 14, 12-16, 22-26**

ວັນນີ້ພຣະກຣິສຕະຈັກສະຫລອງພຣະກາຍແລະພຣະໂລຫິດຂອງພຣະເຢຊູເຈົ້າ. ເປັນໂອກາດໃຫ້ພວກເຮົາໄດ້ພ້ອມກັນຄິດພິດຈາລະນາເຖິງຄວາມໝາຍຄວາມສຳຄັນຂອງພິທີບູຊາມິຊຊາ. ແລະໃນເວລາດຽວກັນກໍເປັນໂອກາດຊ່ວຍພວກເຮົາໃຫ້ເບິ່ງຄືນຊີວິດຄວາມເຊື່ອຂອງພວກເຮົາທຸກຄັ້ງທີ່ພວກເຮົາຮ່ວມມະຫາບູຊາມິຊຊາ.

ມະຫາບູຊາມິຊຊາແມ່ນຫຍັງ? ແລະມີຄວາມສຳຄັນຢ່າງໃດສຳລັບພວກເຮົາຜູ້ເປັນກຣິສຕັງ? ຫລາຍຄົນກໍຈະຕອບວ່າ: ມະຫາບູຊາມິຊຊາແມ່ນທັມລ້ຳເລີກແຫ່ງການທໍລະມານຕາຍແລະການກັບເປັນຄືນມາຂອງພຣະເຢຊູເຈົ້າ. ອັນແມ່ນຄຳຕອບທີ່ຖືກຕ້ອງຕາມຄຳສອນຂອງພຣະກຣິສຕະຈັກ. ແຕ່ຄຳຕອບນີ້ຈະມີຄວາມໝາຍກໍຕໍ່ເມື່ອພວກເຮົາເຂົ້າເຖິງແກ່ນແທ້ຄວາມໝາຍຂອງຄຳຕອບ.

ພໍ່ຄິດວ່າສິ່ງທຳອິດທີ່ຈະຊ່ວຍພວກເຮົາໃຫ້ເຂົ້າໃຈເຖິງຄວາມໝາຍຂອງມະຫາບູຊາມິຊຊານັ້ນຄືຄວາມຮັກ. ພິທີບູຊາມິຊຊາເປັນເຄື່ອງໝາຍແຫ່ງຄວາມຮັກທີ່ພຣະເຈົ້າມີຕໍ່ມະນຸດຜ່ານທາງການຕາຍແລະການກັບເປັນຄືນມາຂອງພຣະເຢຊູກຣິສໂຕເຈົ້າ, ພຣະບຸດອົງດຽວຂອງພຣະອົງ.

ເມື່ອກ່າວເຖິງຄວາມຮັກ, ທຸກຄົນທີ່ມີໜ້າໃນທີ່ນີ້ລ້ວນແຕ່ມີປະສົບການ. ຍ້ອນພວກເຮົາຖືກສ້າງມາດ້ວຍຄວາມຮັກແລະເປັນຄົນທີ່ຮູ້ຈັກຮັກ. ເມື່ອພວກເຮົາຮັກຜູ້ໃດຜູ້ໜຶ່ງແລ້ວ, ພວກເຮົາຈະບໍ່ມີຊີວິດເພື່ອຕົນເອງອີກ ແຕ່ຊີວິດຂອງພວກເຮົາຈະເປັນຂອງຄົນທີ່ພວກເຮົາຮັກ. ແລະສິ່ງດຽວທີ່ພວກເຮົາຄິດຄືຕ້ອງເຮັດຢ່າງໃດເພື່ອໃຫ້ຄົນທີ່ພວກເຮົາຮັກນັ້ນມີຄວາມສຸກແລະມີຊີວິດອັນຍາວນານກັບພວກເຮົາ. ດັ່ງນັ້ນ, ເມື່ອຄົນຮັກຂອງພວກເຮົາຢູ່ໃນອັນຕະລາຍ ພວກເຮົາພ້ອມທີ່ຈະສະຫລະທຸກຢ່າງເຖິງຈະແມ່ນຊີວິດຂອງພວກເຮົາກໍຕາມ ເພື່ອຊ່ວຍຄົນທີ່ເຮົາຮັກໃຫ້ມີຊີວິດ.

ຄວາມຮັກທີ່ພໍ່ກ່າວມານີ້ ບໍ່ພຽງແຕ່ແມ່ນຄວາມຮັກເລື່ອງບ່າວສາວເທົ່ານັ້ນ, ແຕ່ຍັງແມ່ນຄວາມຮັກລະຫວ່າງເພື່ອນມິດສະຫາຍ ແລະເປັນຕົ້ນລະຫວ່າງພໍ່ແມ່ກັບລູກເຕົ້າ.

ເພາະສະນັ້ນ, ຄວາມຮັກແມ່ນຫຍັງ? ຄວາມຮັກແມ່ນການໃຫ້. ໃຫ້ຊີວິດຂອງຕົນເພື່ອຄົນທີ່ເຮົາຮັກ. ແລະຄວາມຮັກນີ້ພວກເຮົາສຳພັດໄດ້ໃນມະຫາບູຊາມິຊຊາ. ຍ້ອນພຣະບິດາເຈົ້າຮັກມະນຸດຈົນປະທານພຣະບຸດອົງດຽວຂອງພຣະອົງໃຫ້. ແລະພຣະເຢຊູກຣິສໂຕເຈົ້ານີ້ກໍຮັກພວກເຮົາແຕ່ລະຄົນຈົນຍອມສະຫລະຊີວິດຂອງພຣະອົງເພື່ອໃຫ້ພວກເຮົາມີຊີວິດ ແລະແມ່ນຊີວິດທີ່ໝັ້ນຄົງຖາວອນ.

ນີ້ແລ, ແມ່ນຄວາມໝາຍຂອງຄຳສອນພຣະກຣິສຕະຈັກທີ່ວ່າ: ມິຊຊາບູຊາແມ່ນທັມລ້ຳເລີກແຫ່ງການຕາຍແລະການກັບຄືນຊີບຂອງພຣະເຢຊູກຣິສໂຕເຈົ້າ.

ຍັງມີອີກສິ່ງໜຶ່ງທີ່ສຳຄັນເຊັ່ນດຽວກັນໃນຄຳນິຍາມຂອງຄວາມຮັກ ນັ້ນຄືການໃຫ້ອະໄພ. ຄວາມຮັກບໍ່ພຽງແຕ່ແມ່ນການໃຫ້ຊີວິດຂອງຕົນເພື່ອຄົນທີ່ເຮົາຮັກເທົ່ານັ້ນ, ແຕ່ຄວາມຮັກຍັງແມ່ນການໃຫ້ອະໄພ. ຍ້ອນຫຍັງ? ຍ້ອນຄວາມຮັກບໍ່ແມ່ນສິ່ງທີ່ຢູ່ໃນໂລກຂອງຈິນຕະການ, ແຕ່ຢູ່ໃນໂລກຂອງຄວາມຈິງ. ດັ່ງນັ້ນ ,ໃນຊີວິດຄູ່ກໍຄືຊີວິດລວມໝູ່, ພວກເຮົາລ້ວນແຕ່ເປັນຄົນອ່ອນແອແລະມີຄວາມຂາດຕົກບົກຜ່ອງ. ພວກເຮົາ

ລ້ອນແຕ່ເປັນຄົນທີ່ປ່ຽນໃຈງ່າຍ. ເພາະສະນັ້ນ, ສິ່ງທີ່ເຮັດໃຫ້ຄວາມຮັກຂອງພວກເຮົາສາມາດສືບຕໍ່ຍາວນານໄປໄດ້ນັ້ນ ຄືການໃຫ້ອະໄພ.

ສິ່ງທີ່ພໍ່ກ່າວມານີ້ບໍ່ຈຳກັດແຕ່ໃນຄວາມສຳພັນລະຫວ່າງຊີວິດຄອບຄົວເທົ່ານັ້ນ, ແຕ່ຍັງແມ່ນຄວາມຮັກລະຫວ່າງເຮົາກັບພຣະເຈົ້າອີກດ້ວຍ.ດັ່ງນັ້ນ, ໃນວັນສຸກສັກສິດ, ເມື່ອພຣະເຢຊູເຈົ້າຖືກຄຶງກາງເຂນພຣະອົງຈຶ່ງກ່າວກັບພຣະບິດາເຈົ້າວ່າ: « ໂອພຣະບິດາເຈົ້າ, ໂຜດຍົກໂທດໃຫ້ພວກເຂົາ, ຍ້ອນພວກເຂົາບໍ່ຮູ້ຈັກສິ່ງທີ່ເຂົາກະທຳ ».

ດ້ວຍເຫດນີ້, ທຸກຄັ້ງກ່ອນທີ່ພວກເຮົາເລີ່ມຕົ້ນພິທີມະຫາບູຊາມິຊາ ອັນແມ່ນທັມລ້ຳເລີກແຫ່ງຄວາມຮັກຂອງພຣະເຈົ້າທີ່ມີຕໍ່ມະນຸດ, ພວກເຮົາໄດ້ພ້ອມກັນຂໍໂທດນຳພຣະເຈົ້າຍ້ອນສິ່ງທີ່ພວກເຮົາກະທຳຜິດຕໍ່ຄວາມຮັກຂອງພຣະອົງ ຜ່ານທາງບົດຂ້າພະເຈົ້າຂໍສາລະພາບ.

ວັນນີ້ຈຶ່ງເປັນໂອກາດສຳຄັນໃຫ້ພວກເຮົາໄດ້ເບິ່ງຄືນຄວາມໝາຍທີ່ແທ້ຈິງຂອງມະຫາບູຊາມິຊຊາ ແລະເປັນຕົ້ນແມ່ນພຣະກາຍແລະພຣະໂລຫິດຂອງພຣະເຢຊູເຈົ້າທີ່ມອບເພື່ອເປັນອາຫານລ້ຽງວິນຍານພວກເຮົາ. ແລະຜ່ານທາງພຣະກາຍແລະພຣະໂລຫິດອັນສັກສິດນີ້ ຂໍໃຫ້ຄວາມຮັກຂອງພຣະເຢຊູເຈົ້ານັບວັນນັບເຕີບໃຫຍ່ຂຶ້ນໃນຊີວິດຂອງພວກເຮົາ. ເພື່ອພວກເຮົາຈະໄດ້ເປັນພິຍານແລະເປັນເຄື່ອງມືແຫ່ງຄວາມຮັກຂອງພຣະເຈົ້າຕໍ່ເພື່ອນພີ່ນ້ອງແລະຄົນທີ່ພວກເຮົາຮັກແພງນັ້ນເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ